ທະນາຄານຮ່ວມພັດທະນາ

| **Position ID:** | EXC_CRS/CARD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** ພະນັກງານ ຄົ້ນຄວ້າ ແລະ ສົ່ງເສີມຜະລິດຕະພັນບັດ

**Position Name:** ***Bank Card Products Research and Supports***

## ❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ສຶກສາຄົ້ນຄວ້າ, ພັດທະນາຜະລິດຕະພັນ ແລະ ຮູບແບບການບໍລິການ ທັນຍຸກສະໄໝໃຫ້ແທດເໝາະສົມກັບຄວາມຕ້ອງການຂອງສັງຄົມໃນແຕ່ລະໄລຍະ ເພື່ອນຳສະເໜີຕໍ່ຫົວຫນ້າສາຍງານ;
- ສຶກສາ ແລະ ວິເຄາະ ພຶດຕິກຳຂອງລູກຄ້າ ແລະ ກົນໄກຕະຫລາດ ພາຍໃນ ແລະ ຕ່າງປະເທດ ໃນປັດຈຸບັນ;
- ສຶກສາ ແລະ ວິເຄາະ ຜະລິດຕະພັນຂອງຄູ່ແຂ່ງ ພາຍໃນ ແລະ ຕ່າງປະເທດ ໃນປັດຈຸບັນ;
- ຕິດຕາມ, ວິເຄາະຂໍ້ມູນ ແລະ ປະເມີນ ຜະລິດຕະພັນບັດ, QR code, EDC, E-commerce, ATM, ຫຼື ໂຄງການຕ່າງໆທີ່ໄດ້ຮັບມອບໝາຍ;
- ສ້າງແຜນການຕະຫລາດ ເພື່ອສ້າງກິດຈະກຳສົ່ງເສີມການຂາຍ ແລະ ໂປຼໂມຊັ່ນ ຜະລິດຕະພັນບັດ, QR code, EDC, E-commerce ແລະ ຜະລິດຕະພັນອື່ນໆ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

## ❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ການຕະຫຼາດ;
  - ການເງິນ-ການທະນາຄານ;
  - ເສດຖະສາດ, ບໍລິຫານທຸລະກິດ ຫຼື ສາຂາອື່ນທີ່ກ່ຽວຂ້ອງ.

## ❖ ກ່ຽວກັບຜູ້ສະໝັກ (About Applicant):

- ຜູ້ສະໝັກທີ່ຮຽນຈົບໃໝ່ ຫຼື ມີປະສົບການເຮັດວຽກມາກ່ອນ ຍິ່ງເປັນການດີ;
- ຜູ້ສະໝັກຈະຕ້ອງສາມາດສື່ສານ (ພາສາອັງກິດ ຫຼື ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງ) ໃນລະດັບດີ;
- ມີທັກສະໃນການນຳໃຊ້ Microsoft office, Canva ຫຼື Figma ໄດ້ເປັນຢ່າງດີ;
- ມີທັກສະໃນການ ວິເຄາະ SWOT, 4Ps ແລະ CBA;
- ມີຄວາມຄິດສ້າງສັນ ແລະ ມີທັກສະໃນການແກ້ໄຂບັນຫາໄດ້ດີ;
- ມີປະສົບການໃນວຽກງານວາງແຜນການຕະຫຼາດ, ວິເຄາະການຕະຫຼາດ ຫຼື ຄົ້ນຄວ້າຜະລິດຕະພັນ ຈະພິຈາລະນາເປັນພິເສດ;
- ເປັນຄົນທີ່ມີມະນຸດສຳພັນດີ, ສາມາດຕິດຕໍ່ປະສານງານກັບລູກຄ້າ ແລະ ຄູ່ຮ່ວມທຸລະກິດໄດ້ທຸກລະດັບ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ສາມາດເດີນທາງໄປຕ່າງແຂວງໄດ້ບາງໄລຍະ ຕາມການມອບໝາຍ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ, ແລະ ຍຶດໝັ້ນໃນໜ້າທີ່.